## ການບ້ານບົດທີ 4 ພາກຕົ້ນ

# ພວກຟາລີຊາຍ

*ໃນບົດນີ້ ເຮົາຈະຮຽນເລື່ອງຫຼັກຄວາມເຊື່ອຂອງພວກຟາລີຊາຍ. ເມື່ອໄວໜຸ່ມ ໂຊໂລເຂົ້າໂຮງຮຽນຂອງຄາມາລີເອັນຊຶ່ງສອນຕາມຫຼັກຟາລີຊາຍວ່າ ຈະໄດ້ລອດໂດຍຖືພະບັນຍັດຂອງໂມເຊເທົ່ານັ້ນ.*

**1** ໃນພວກຊາດຢິວ ມີຈຳພວກໜຶ່ງທີ່ຖືພະບັນຍັດຂອງໂມເຊ ຢ່າງເຄັ່ງຄັດ.

ກ. ພວກນັ້ນຄືພວກໃດ? ______________

ຂ. ຄາມາລີເອັນຂຶ້ນກັບພວກໃດ? ________

ຄ. ຄອບຄົວຂອງໂຊໂລເຂົ້າກັບພວກໃດໃນສາສະໜາຢິວ? _________________ (ກຈກ 26:5)




**2** ໃຫ້ອ່ານ ກຈກ 5:34

ກ. ຄູອາຈານນັ້ນຊື່ຫຍັງ? ________________________________________

ຂ. ຂຶ້ນກັບສາສະໜາພວກໃດ? ____________________________________

**3** ໃຫ້ອ່ານ ຟີລິບປອຍ 3:5

ກ. ໂປໂລແລະເຊື້ອສາຍເປັນຊາດໃດ? ______________________________

ຂ. ຮຽນພະທຳໃນກຸ່ງໃດ?(ທີ່ທ່ານຮຽນມາກ່ອນໃນບົດ 3 ພປ) _______________

**4** ໃຫ້ອ່ານ ມທ 23:2-3

ກ. ແມ່ນພວກໃດໃນສາສະໜາຢິວທີ່ສອນເລື່ອງພະບັນຍັດແຕ່ບໍ່ເຮັດຕາມ? __________

ຂ. ເຂົາອ່ານພະບັນຍັດຂອງໂມເຊຈາກພະຄຳພີພາກພະສັນຍາໃດ? ______________

**5** ມີອີກເທື່ອໜຶ່ງພະເຍຊູຕຳໜິພວກຟາລີຊາຍ. ໃຫ້ອ່ານ ມັດທາຍ 22:18.

ກ. ພະອົງຮ້ອງເຂົາວ່າເປັນຄົນຢ່າງໃດ? ______________________________

ຂ. ພະອົງຖືວ່າເປັນເພື່ອນ ຫຼືເປັນສັດຕູ? ____________________________

*ຕໍ່ໄປເຮົາຈະຮຽນຮູ້ເຫດທີ່ພວກຟາລີຊາຍນັ້ນເປັນສັດຕູຂອງພະເຍຊູ. ແຕ່ກ່ອນນັ້ນຈະວັດຜົນເລື່ອງ ໂຮງຮຽນຂອງຄາມາລີເອັນ.*



**6** ຄາມາລີເອັນສອນວ່າມີສອງ ປະການໃດທີ່ຈຳເປັນຈຶ່ງຈະໄດ້ລອດ?

__________ ແລະ __________



**7** ກ. ແມ່ນພວກໃດໃນສາສະໜາຢິວທີ່ສອນວ່າ ຈຳເປັນຕ້ອງຮັບພິທີຕັດ ແລະຖືພະບັນຍັດຈຶ່ງຈະໄດ້ລອດ? ______________________________

ຂ. ອາຈານທີ່ສອນຢ່າງນັ້ນຊື່ຫຍັງ? ______________________________

ຄ. ເຂົາມີພະຄຳພີ ພາກພະສັນຍາໃດ? ______________________________

ງ. ໂຮງຮຽນຂອງຄາມາລີເອັນຢູ່ໃນກຸງໃດ? ______________________________

*ຕໍ່ໄປໂຊໂລເຂົ້າໃຈດີວ່າ ບໍ່ມີໃຜທີ່ຖືພະບັນຍັດຂອງໂມເຊໄດ້. ແຕ່ເມື່ອເພິ່ນຍັງເປັນນັກສຶກສາ ເພິ່ນຍັງບໍ່ຮູ້ເລື່ອງທີ່ຈະໄດ້ລອດໂດຍ ຄວາມເຊື່ອໃນພະເຢຊູ.*

**8** ໂດຍການສອນວ່າ ບໍ່ມີທາງລອດນອກຈາກພິທີຕັດແລະພະບັນຍັດ ພວກຟາລີຊາຍເຮັດຢ່າງໃດກັບ ປະຕູລາດຊະແຜ່ນດິນສະຫວັນ? (ເລືອກ)

ກ. ເປີດ ຂ. ປິດ ຄ. ທຳລາຍ




9.

ກ. ເຄື່ອງກີດກັ້ນບໍ່ໃຫ້ພະພອນຂອງພະເຈົ້າມາເຖິງຄົນທີ່ບໍ່ເປັນຊາດຢິວປະກອບດ້ວຍ ສອງປະການໃດ? ______________ ແລະ ______________

ຂ. ແມ່ນພວກໃດໃນສາສະໜາຢິວທີ່ມັກເນັ້ນເລື່ອງນັ້ນ? ______________

**10** ໜ້າເສຍດາຍທີ່ ພະເຈົ້າໄດ້ເລືອກຊາດຢິວໄວ້ໃຫ້ຮັບພະພອນຂອງພະເຈົ້າໃຫ້ທຸກຊາດ ແຕ່ພວກ ຢິວນັ້ນຕັ້ງເຄື່ອງກີດກັ້ນໄວ້.

ກ. ເຄື່ອງກີດກັ້ນນັ້ນປະກອບດ້ວຍສອງປະການໃດ? ________ ແລະ ________

ຂ. ແມ່ນພວກໃດສ້າງເຄື່ອງກີດກັ້ນນັ້ນໄວ້? ______________________________

*ຫຼັງຈາກທີ່ເພິ່ນໄວ້ວາງໃຈໃນພະເຢຊູ ຄວາມຄິດຂອງໂຊໂລປ່ຽນຫຼາຍ.*

**11** ໃຫ້ທ່ານເປີດອ່ານ ຄລຕ 3:10-12 ໂປໂລສອນຢ່າງໃດ? (ຂີດໝາຍເອົາ 3 ຂໍ້ທີ່ຖືກ)

ກ. ທຸກຄົນທີ່ບໍ່ໄດ້ເຮັດຕາມຂໍ້ຄວາມທີ່ຂຽນໄວ້ໃນໜັງສືພະບັນຍັດທຸກຂໍ້ຖືກປ້ອຍດ່າ.

ຂ. ບໍ່ມີມະນຸດຄົນໃດທີ່ຊື່ງຖືວ່າເປັນຄົນຊອບທຳຕໍ່ພະພັກພະເຈົ້າໂດຍປະຕິບັດຕາມພະບັນຍັດ.

ຄ. ມີບາງຄົນທີ່ຈະໄດ້ລອດໂດຍການປະຕິບັດພະບັນຍັດຂອງໂມເຊ.

ງ. ຜູ້ທີ່ຊື່ງຖືວ່າເປັນຄົນຊອບທຳເພາະດ້ວຍຄວາມເຊື່ອ ຈະໄດ້ຊີວິດ.

| ຕຳຕອບ: |
|---|

**1** *ກ. ຟາລີຊາຍ ຂ. ຟາລີຊາຍ ຄ. ຟາລີຊາຍ*

**2** *ກ. ຄາມາລີເອັນ ຂ. ຟາລີຊາຍ*

**3** *ກ. ເຮັບເລີ ຂ. ເຢລູຊາເລັມ*

**4** *ກ. ຟາລີຊາຍ ຂ. ພາກເດີມ*

**5** *ກ. ໜ້າຊື່ໃຈຄົດ ຂ. ສັດຕູກັນ*

**6** *ພິທີຕັດ ແລະ ພະບັນຍັດ*

**7** *ກ. ພວກຟາລີຊາຍ ຂ. ຄາມາລີເອັນ ຄ. ເດີມ ງ. ເຢລູຊາເລັມ*

**8** *ຂ ຖືກ*

**10** *ກ. ພິທີຕັດ ແລະ ພະບັນຍັດ ຂ. ຟາລີຊາຍ*

**11** *ກ ຂ ງ ຖືກ*

**ການບ້ານບົດທີ 4 ພາກປາຍ**

# ໂຊໂລຂື່ນເທົ່ງຄຣິສຕຽນ

**1** ພະຄຳພີບໍ່ລາຍງານເລື່ອງຊີວິດຂອງເພິ່ນຫຼັງຈາກຮຽນໃນໂຮງຮຽນພະທຳຂອງຄາມາລີເອັນ. ເຮົາ ບໍ່ຮູ້ບ່ອນທີ່ເພິ່ນໄປ ແຕ່ນຶກວ່າເພິ່ນອາດຈະກັບໄປຢູ່ໃນເມືອງຕາໂຊອີກ. ຄິດວ່າເພິ່ນອາດຈະບໍ່ຢູ່ໃນ ກຸງເຢລູຊາເລັມ ເມື່ອພະເຢຊູຕາຍທີ່ໄມ້ກາງແຂນ ເພາະບໍ່ເຫັນເພິ່ນລາຍງານເລື່ອງ. ແຕ່ອີກບໍ່ ເທິງເພິ່ນກັບມາແລ້ວ. ພະເຢຊູອາຍຸ 33 ປີ ເວລາຕາຍ ຖ້າຢ່າງນັ້ນໂຊໂລອາດຈະອາຍຸຈັກປີເວລາກັບມາຈາກເຢລູຊາເລັມ. (ເລືອກ)

ກ. ບໍ່ເຖິງ 15 ປີ ຂ. 50 ກວ່າປີ ຄ. 30 ກວ່າປີ

**ພະວິຫານ**




**2** ກ. ມີຄົນໃດອາຍຸ 30 ກວ່າປີກັບມາເຢລູຊາເລັມ? ______________________________

ຂ. ກັບມາເມື່ອໃດ? (ເລືອກ)

_______ ກ່ອນພະເຢຊູຕາຍ

_______ ວັນດຽວທີ່ພະເຢຊູຕາຍ

_______ ຫຼັງຈາກພະເຢຊູຕາຍ

ຄ. ໃນຮູບນັ້ນເຫັນຕຶກໃດທີ່ງາມທີ່ສຸດ? ______________________________________

**3** ກັບມາແລ້ວພໍດີເພິ່ນຮ່ວມກັບມິດສະຫາຍຟາລີຊາຍແລະຜູ້ນຳສາສະໜາຢິວອີກ.




ກ. ໃນເມື່ອໂຊໂລບໍ່ຢູ່ ພະເຢຊູເຂົ້າໄປສອນຢູ່ໃສ? ______________________________

ຂ. ພະເຢຊູສອນຫຍັງກ່ຽວກັບຕົວເອງ? ______________________________________

ຄ. ດັ່ງນັ້ນ ເຂົາເຮັດຫຍັງກັບພະເຢຊູ? ________________________________________

**4** ຍິ່ງກວ່ານັ້ນອີກ ພວກຟາລີຊາຍຕໍ່ຕ້ານພວກສາວົກຂອງພະເຢຊູ ເພາະພວກສາວົກນັ້ນລາຍງານເລື່ອງ ເຫດການທີ່ໜ້າອັດສະຈັນ ຄືເຫດການໃດ? (ກຈກ 5:30) ________________

_____________________________________________________________________

**5** ພວກເຈົ້ານາຍຄົນຢິວໃຈຮ້າຍຫຼາຍໃນເລື່ອງນີ້ ແລ້ວເຂົາຢາກຈັບພວກສາວົກບໍ່ໃຫ້ເທດສະໜາໃນເລື່ອງ ນີ້ອີກຕໍ່ໄປ. ໃນພວກຟາລີຊາຍເຫຼົ່ານັ້ນມີຄົນຜູ້ໜຶ່ງທີ່ໂຊໂລຮູ້ຈັກດີຄືໃຜ? (ກຈກ 5:34) ______________________________________________________

*ເປັນອາຈານເກົ່າຂອງໂຊໂລແທ້!*

**6** ໃນກຈກ 5:40 ພວກເຈົ້ານາຍຄວນເຮັດຢ່າງໃດກັບພວກສາວົກ? (ຕື່ມຄວາມທີ່ຂາດ)

ກ. ເຂົາເອີ້ນພວກອັກຄະສາວົກເຂົ້າມາແລ້ວຈຶ່ງ ______________________________ ເຂົາ.

ຂ. ແລະສັ່ງຫ້າມບໍ່ໃຫ້ອອກພະນາມຂອງ ______________________________________ .

**7** ກ່ອນພະເຢຊູຕາຍ ພະເຢຊູກ່າວເຕືອນພວກຟາລີຊາຍດັ່ງຕໍ່ໄປນີ້: "ໂອ ຄົນໜ້າຊື່ໃຈຄົດເຮີຍ ຈະມາທົດລອງເຮົາເຮັດຫຍັງ." (ມທ 22:18) ດັ່ງນັ້ນ ເຫັນວ່າພວກຟາລີຊາຍເປັນເພື່ອນຫຼື ເປັນສັດຕູຂອງພະອົງ? ______________________________________________________

**8** ໃຫ້ອ່ານ ມທ 27:41 ເມື່ອພະເຢຊູຖືກຄຶງທີ່ໄມ້ກາງແຂນ ພວກຜູ້ນຳໃນສາດສະໜາຢິວເຮັດຫຍັງ? ____________________________________________________________

**9** ກ. ໂຊໂລເຂົ້າຮ່ວມກັບພວກໃດ ຊຶ່ງລັງກຽດພະອົງແລະພວກຄຣິສຕຽນ? ______________

ຂ. ກ່ອນທີ່ຈະຮັບເຊື່ອໃນພະເຢຊູ ໂຊໂລເຂົ້າຂ້າງຄຣິສຕຽນຫຼືຕໍ່ສູ້? ________________

*ຕໍ່ໄປນີ້ ເຮົາຈະຮຽນຮູ້ເຫດທີ່ເພິ່ນຕໍ່ຕ້ານ*

**10** ພວກຜູ້ນໍາໃນສາດສະໜາຢິວຈັບຄຣິສຕຽນຄົນໜຸ່ມຊື່ ຊະເຕຟາໂນ




ກ. ເຂົາເຮັດຫຍັງກັບຊະເຕຟາໂນ? (ເລືອກ)

_______ ປ່ອຍ _______ ຂ້າ _______ ອ່ວຍພອນ

ຂ. ໂຊໂລເຫັນດີນໍາບໍ່? ________________________________________________

**11** ໃຫ້ອ່ານ ກຈກ 7:58-60 ແລະ 8:1

ກ. ເຫັນເຂົາຄວ່າງກ້ອນຫີນໃສ່ໃນຂໍ້ໃດແດ່? ຂໍ້ ____________ ແລະ ຂໍ້ _____________

ຂ. ຜູ້ຄວ່າງຫີນປົດເສື້ອຂອງຕົນໄວ້ໃກ້ຕີນຂອງຊາຍໜຸ່ມຊື່ໂຊໂລ ໃນຂໍ້ໃດ? ____________

ຄ. ຊະເຕຟາໂນອ້ອນວອນຂໍໃຫ້ພະເຈົ້າຍົກໂທດເຂົາ ໃນຂໍ້ໃດ? ___________________

ງ. ໂຊໂລເຫັນດີໃນການທີ່ເຂົາຂ້າຊະເຕຟາໂນ ໃນບົດໃດແລະຂໍ້ໃດ? ບົດ ___ ແລະ ຂໍ້ ___

> ໃຫ້ທ່ານເອົາສໍສີຟ້າຂີດກ້ອງຄໍາ "ໂຊໂລ" ໃນສາມຂໍ້ຕໍ່ໄປນີ້.
>
> ກຈກ 7:58 ກຈກ 8:1 ກຈກ 8:3
>
> (ເພື່ອຈະຫາໄດ້ງ່າຍໃນອະນາຄົດ).

**12** ໃຫ້ອ່ານ ກຈກ 8:3

ກ. ແມ່ນໃຜພະຍາຍາມທໍາລາຍຄຣິສຕະຈັກຢ່າງຮຸນແຮງ? _______________________

ຂ. ຂັງທັງຍິງແລະຊາຍໄວ້ຢູ່ໃສ? ___________________________________________

ຄ. ເຂົາໄປຕາມລາກຄຣິສຕຽນຢູ່ໃສ? ________________________________________

**13** ໜ້າເສຍດາຍແທ້ ໂຊໂລຖືສາສະໜາຢິວຕາມຫຼັກຟາລີຊາຍ ກາຍເປັນສັດຕູຂອງຄຣິສຕຽນ



( ກຈກ 8:3 )

ກ. ໂຊໂລຢາກຈັບໃຜ? ______________________________

ຂ. ຂັງໄວ້ຢູ່ໃສ? ______________________________

ຄ. ຊາຍໜຸ່ມທີ່ເຂົາຈັບໄປຂ້າຍ້ອນເຊື່ອໃນ ພະເຢຊູ ຊື່ຫຍັງ? ______________

ງ. ແມ່ນໃຜທີ່ເຫັນດີໃນການນັ້ນ? ______________________________

**14** ຫຼັງຈາກຊະເຕຟາໂນຕາຍ ໂຊໂລເຮັດຫຍັງ? (ເລືອກ)

ກ. ຂົ່ມເຫັງຄຣິສຕຽນ

ຂ. ຊ່ວຍຄຣິສຕຽນ

ຄ. ບໍ່ໄດ້ເຮັດຫຍັງ

**15** ຕໍ່ໄປ ຫຼັງຈາກເຊື່ອໄວ້ວາງໃຈໃນພະເຢຊູ ເພິ່ນບໍ່ໄດ້ຂົ່ມເຫັງຄຣິສຕຽນ ແຕ່ເພິ່ນຖືກຂົ່ມເຫັງຈາກຜູ້ອື່ນ. ຕາມໃນ ກຈກ 14:22 ຄົນທີ່ຈະເຂົ້າໃນແຜ່ນດິນຂອງພະເຈົ້າ ຈຳເປັນຕ້ອງຜ່ານຫຍັງ?

**16** ໃຫ້ທວນຄືນກ່ອນ

ກ. ຊາຍໜຸ່ມທີ່ເຂົາຄວ່າງຫີນຂ້າຍ້ອນຄວາມເຊື່ອເພິ່ນຊື່ຫຍັງ? ______________

ຂ. ແມ່ນໃຜຮັກສາເສື້ອຂອງຄົນທີ່ຂ້າຊະເຕຟາໂນ? ____________________

ຄ. ໃນ ກຈກ 14:22 ໂຊໂລບອກຄຣິສຕຽນໃນແຂວງຄາລາເຕຍ ເຂົາຕ້ອງຜ່ານຄວາມທຸກລຳບາກຫຼາຍປະການຈຶ່ງຈະເຂົ້າໄປໃສ? ______________________

*ຈົ່ງຮັບພິຈາລະນາ*

*ຄົນໃດທີ່ຈະເຂົ້າແຜ່ນດິນຂອງພະເຈົ້າຈະຕ້ອງຜ່ານຄວາມທຸກລຳບາກຫຼາຍປະການ.*

- *ທ່ານເຄີຍຜ່ານຄວາມທຸກລຳບາກຢ່າງໃດ? (ບໍ່ຕ້ອງຂຽນຄຳຕອບຕໍ່ໄປ)*
- *ຕາມໃນ ໂຢຮັນ 15:18 ແມ່ນເພາະເຫດໃດທີ່ເຮົາຈະຖືກລຳບາກ?*
- *ຕາມໃນ ມທ 5:10 ຄົນທີ່ຖືກຂົ່ມເຫງເພາະເຫັນແກ່ຄວາມຊອບທຳຈະເປັນຢ່າງໃດ?*
- *ແຜ່ນດິນສະຫວັນເປັນຂອງພວກໃດ?*
- *ເມື່ອທ່ານຖືກລຳບາກ ຫຼືຖືກຂົ່ມເຫງ ທ່ານຮູ້ສຶກຕົວເປັນຢ່າງໃດ?*

ຕຳຕອບ:

**1** *ຄ ຖືກ*

**2** *ກ. ໂຊໂລ ຂ. ຫຼັງຈາກພະເຢຊູຕາຍ ຄ. ພະວິຫານ*

**3** *ກ. ໃນພະວິຫານ ຂ. ສອນວ່າເປັນບຸດຂອງພະເຈົ້າ ຄ. ຂ້າ*

**4** *ພະເຈົ້າບັນດານໃຫ້ພະເຢຊູຄືນມາໃໝ່*

**5** *ຄາມາລິເອັນ*

**6** *ກ. ຊ້ຽນ ຂ. ພະເຢຊູ*

**7** *ເປັນສັດຕູ*

**8** *ເຢາະເຍີ້ຍພະອົງ*

**9** *ກ. ຟາລິຊາຍ ຂ. ຕໍ່ສູ້*

**10** *ກ. ຂ້າ ຂ. ເຫັນດີ*

**11** *ກ. ຂໍ້ 58 ແລະ 59 ຂ. ຂໍ້ 58 ຄ. ຂໍ້ 60 ງ. ບົດ 8 ຂໍ້ 1*

**12** *ກ. ໂຊໂລ ຂ. ໃນຄຸກ ຄ. ຕາມຍ້າວເຮືອນ*

**13** *ກ. ຄຼິດສະຕຽນ ຂ. ໃນຄຸກ ຄ. ຊະເຕຟາໂນ ງ. ໂຊໂລ*

**14** *ກ ຖືກ*

**15** *ຜ່ານຄວາມທຸກລຳບາກຫຼາຍປະການ*

**16** *ກ. ຊະເຕຟາໂນ ຂ. ໂຊໂລ ຄ. ແຜ່ນດິນຂອງພະເຈົ້າ*

**ການປະຊຸມບົດທີ 4**

# ການໄຖ່ໃຫ້ພົ້ນ

(ຄລຕ 3:10-14)

**1** ໃນການຮຽນເທື່ອກ່ອນ ເຮົາເຫັນວ່າ ພະບັນຍັດຂອງໂມເຊມີສ່ວນດີ ແລະມີປະໂຫຍດຢູ່. ບັນຫາ ແຕ່ຄົນເຮົາຈະບໍ່ໃຊ້ພະບັນຍັດໃຫ້ເປັນປະໂຫຍດ ແຕ່ຈະໃຊ້ຢ່າງບໍ່ຖືກຕ້ອງ. ເຊັ່ນ ໂຊໂລ ແລະພວກ ຟາລີຊາຍອື່ນ ໆ.

*ໃຫ້ຮ່ວມກັນອ່ານ ຄລຕ 3:10-14 ເຫັນວ່າຄົນທີ່ໃຊ້ພະບັນຍັດຢ່າງບໍ່ຖືກ ຈະຢູ່ໃຕ້ຄຳປ້ອຍດ່າຂອງພະບັນຍັດນັ້ນ.*

ຄາລາເຕຍ 3:10-14 ແບ່ງເປັນສອງສ່ວນ
ກ. ຂໍ້ໃດແດ່ກ່າວເຖິງຄວາມປ້ອຍດ່າຂອງພະບັນຍັດ? ___________________________
ຂ. ຂໍ້ໃດແດ່ກ່າວເລື່ອງການໄຖ່ໃຫ້ພົ້ນຈາກຄວາມປ້ອຍດ່ານັ້ນ? ____________________

## ການຢູ່ໃຕ້ຄວາມປ້ອຍດ່າຂອງພະບັນຍັດ (ຄລຕ 3:10-12)

**2** ກ. ສ່ວນຄົນທີ່ອາໄສວ່າຈະໄດ້ລອດໂດຍຖືພະບັນຍັດ ຄົນນັ້ນຢູ່ໃຕ້ຫຍັງ? (ຂໍ້ 10)

_______________________________________________________________

ຂ. ໃຫ້ເປີດອ່ານ ໂລມ 7:18-19 ເປັນຫຍັງເຮົາທຸກຄົນຢູ່ໃຕ້ຄວາມປ້ອຍດ່າຂອງພະບັນຍັດ?

_______________________________________________________________

**3** ໃຫ້ເຮົາຮຽນຢ່າງລະອຽດໂດຍອ່ານຢາໂກໂບ 2:10. ຢາໂກໂບ 2:10 ເຮັດໃຫ້ຄາລາເຕຍ 3:10 ຈະແຈ້ງຢ່າງໃດ? _____________________________________________________

_______________________________________________________________

**4** ຖ້າມີສາຍໄຟຟ້າທີ່ຂາດຊັ່ງຕີແມັດດຽວ ກໍຍັງຖືວ່າຂາດຕາຍຕົວ. ໃຫ້ທ່ານຄິດສະເໜີຕົວຢ່າງອື່ນ ໆ. _______________________________________________________

**5** ພະບັນຍັດເປັນນາຍທີ່ໂຫດຮ້າຍຫຼາຍ. ຜິດແຕ່ປະການດຽວກໍຖືວ່າຜິດໝົດ. ນັ້ນແຫຼະເປັນເຫດໃຫ້ບໍ່ມີຈັກ ຄົນຊອບທຳໃນພະບັນຍັດ. ໃຫ້ທ່ານເບິ່ງຮູບຕໍ່ໄປນີ້:




ຮູບນັ້ນແຈ້ງເລື່ອງໃນ ຄລຕ 3:10 ຢ່າງໃດ? ________________________________

________________________________________________________________

**6** ໃນ ຄລຕ 3:11-12 ໂປໂລ ກ່າວອ້າງສອງຂໍ້ຈາກພະຄຳພີເດີມ. ມີແຕ່ທາງສອງເສັ້ນ

ກ. ເສັ້ນໃດໃນຂໍ້ 11? ________________________________________

ຂ. ເສັ້ນໃດໃນຂໍ້ 12? ________________________________________

ຄ. ເປັນຫຍັງເຮົາຮູ້ວ່າ ເສັ້ນທີສອງນັ້ນໃຊ້ບໍ່ໄດ້? ____________________________

________________________________________________________________

*ຖ້າເຮົາຈະພະຍາຍາມຍົກຕົວຂຶ້ນສະຫວັນ ເປັນໄປບໍ່ໄດ້ຈັກເທື່ອ.*
*ມີແຕ່ທາງເສັ້ນຂອງພະເຈົ້າໄດ້.*

## **ການໄຖ່ໃຫ້ພົ້ນຈາກຄວາມປ້ອຍດ່າ** (ຄລຕ 3:13-14)

**7** ກ. ຄຳວ່າ "ໄຖ່" ເຫັນໃນຂໍ້ໃດ? ________________________________

ຂ. ໃຫ້ອ່ານ ຄລຕ 4:1-5 ເຫັນຄຳວ່າ "ໄຖ່" ໃນຂໍ້ໃດ? ____________________

ໃຫ້ທ່ານເອົາສໍສີແດງຂີດອ້ອມຄຳວ່າ "ໄຖ່" ໃນ ຄລຕ 3:13 ແລະ 4:5

**8** ໃນພາສາເດີມຂອງພະຄຳພີໃໝ່ ຄຳທີ່ແປເປັນ "ໄຖ່" ມີຄວາມໝາຍຢ່າງສະເພາະ. ໃນຈັກກະພັດໂລມຍັງມີຂ້າທາດ, ຍັງມີຕະລາດເພື່ອຂາຍຂ້າທາດອີກຊ້ຳ. ໃຫ້ທ່ານເບິ່ງຮູບຕໍ່ໄປນີ້:




**9** ກ. ຮູບສາມໃບນັ້ນສະແດງໃຫ້ເຫັນການກະທຳຂອງພະເຢຊູຢ່າງໃດ? ________________

________________________________________________________________

ຂ. ໃຫ້ອ່ານ 1 ກລທ 6:20 ແລະ ພະນິມິດ 5:9 ພະເຢຊູເສຍຫຍັງເປັນຄ່າໄຖ່? __________

________________________________________________________________

ຄ. ເສຍຄ່າໄຖ່ເພື່ອໄຖ່ຊາດໃດ? ________________________________________

*ຕໍ່ໄປເຮົາຈະສຶກສາກ່ຽວກັບການໄຖ່ໃຫ້ລອດຈາກຄວາມປ້ອຍດ່າ.*

**10** ໃຫ້ອ່ານ ຄລຕ 3:10-14 ກ່ອນ.

ກ. ໃນຂໍ້ທີ 10 ເຫັນພວກໃດທີ່ຖືກປ້ອຍດ່າ? ________________________________

________________________________________________________________

ຂ. ໃນຂໍ້ທີ 13 ເຫັນຄົນໃດທີ່ຖືກປ້ອຍດ່າ (ໃນວົງເລັບ)? ________________________

________________________________________________________________

**11** ກ. ໃນຮູບຕໍ່ໄປນີ້ ຮູບທີ່ສະແດງເຖິງຄວາມປ້ອຍດ່າຂອງພະເຈົ້າຕໍ່ຄົນທີ່ບໍ່ເຮັດຕາມຂໍ້ຄວາມທີ່ຂຽນໄວ້ ໃນພະບັນຍັດຢູ່ເບື້ອງຊ້າຍ ຫຼືເບື້ອງຂວາ? ____________________________




ຂ. ຮູບໃດສະແດງເຖິງຄວາມປ້ອຍດ່າຂອງພະເຈົ້າຕໍ່ຄົນທີ່ຖືກແຂວນໄວ້ທີ່ຕົ້ນໄມ້?

____________________________________________________________

**12** ກ. ຕາມຂໍ້ອ້າງລຸ່ມໜ້າພະຄຳພີ ໃນ ຄລຕ 3:10 ຍົກມາຈາກບົດແລະຂໍ້ໃດໃນພະຄຳພີເດີມ?

____________________________________________________________

ຂ. ຄລຕ 3:13 ຍົກຈາກບົດແລະຂໍ້ໃດ? ____________________________________

**13** ກ. ໃຫ້ທ່ານອະທິບາຍເປັນຄຳງ່າຍໆ ເລື່ອງຮູບຂ້າງຊ້າຍ. ___________________________

____________________________________________________________

ຂ. ຮູບຢູ່ຂ້າງຂວາສະແດງເຖິງຫຍັງ? ________________________________________

____________________________________________________________

____________________________________________________________

**14** ແມ່ນໃນບົດແລະຂໍ້ໃດທີ່ໂຊໂລອ້າງຄຳວ່າຄົນໃດທີ່ບໍ່ເຮັດຕາມຂໍ້ຄວາມທີ່ຂຽນໄວ້ໃນພະບັນຍັດຈະຖືກ ປ້ອຍດ່າ? ____________________________________________________

**15** ໃນສະໄໝພະຄຳພີເດີມ ຄົນທີ່ເຂົາຖືວ່າກະບົດຫຼືຜິດຕໍ່ ຊາດຢິວ ອາດຈະຖືກຄວ່າງຫີນໃຫ້ຕາຍ(ຢ່າງຊະເຕຟາໂນ) ຫຼືອາດຈະແຂວນໄວ້ທີ່ໄມ້ກາງແຂນ. ການນັ້ນສະແດງວ່າເຂົາຢູ່ໃຕ້ຄວາມປ້ອຍດ່າ. ໃນເມື່ອພະເຢຊູຖືກ ແຂວນໄວ້ທີ່ໄມ້ກາງແຂນ ພະອົງຖືກຄວາມປ້ອຍດ່າແທນໃຜ? ____________________________________________________________

**16** ມີໄກ່ແມ່ທີ່ຟັກໄຂ່ຈົນກວ່າອອກເປັນໂຕ ຕໍ່ມາຄອກໄກ່ຖືກໄຟໄໝ້ຈົນໝົດເຫຼືອແຕ່ຂີ້ເຖົ່າ. ຂີ້ເຖົ່າເຢັນ ແລ້ວເຈົ້າຂອງເຫັນຊາກໄກ່ທີ່ຍັງຢູ່ໃນຮັງ. ເພິ່ນຍົກມັນຂຶ້ນເຫັນລູກມັນຍັງແຂງແຮງຢູ່ ປາກົດວ່າໄກ່ ແມ່ນັ້ນບໍ່ໄດ້ໜີປະລູກ ແຕ່ເອົາຕົວປ້ອງກັນລູກໄວ້ບໍ່ໃຫ້ຕາຍ ສະນັ້ນແມ່ຈຶ່ງຍອມຕາຍເພື່ອລູກ.

*ໃຫ້ອ່ານ ມທ 27:39-43 ພວກນັກທຳທີ່ເຍາະເຍີ້ຍພະອົງ ບົກວ່າພະອົງລົງຈາກໄມ້ກາງແຂນບໍ່ໄດ້. ທີ່ຈິງພະອົງລົງໄດ້ ແຕ່ບໍ່ຍອມລົງ ເພາະເພິ່ນຕາຍແທນພວກເຮົາ. (ຂໍ້ 42) ໃນບົດຮຽນຕໍ່ໄປ ເຮົາຈະຮຽນເລື່ອງທີ່ໂຊໂລຫຼົບຕັ້ງໃຈໃໝ່. ໃນເວລາດຽວນັ້ນ ພະອົງໄຖ່ເພິ່ນ ຈາກຄວາມປ້ອຍດ່າຂອງພະບັນຍັດ ແລ້ວພະພອນທີ່ພະເຈົ້າສັນຍາໄວ້ໃຫ້ອັບລາຮາມ ສຳເລັດໃນຊີ ວິດຂອງໂຊໂລຕາມທີ່ເຫັນໃນ ຄລຕ 3:14.*

## ອ້ອນວອນປິດ

- *ໃຫ້ຂອບໃຈພະອົງທີ່ໄດ້ລອດຈາກຄວາມປ້ອຍດ່າຂອງພະບັນຍັດ*
- *ຂໍໃຫ້ພະອົງຊ່ວຍເຮົາໃນການປະກາດຂ່າວປະເສີດໃຫ້ຄົນອື່ນຮັບການໄຖ່ໂທດ.*

ຕຳຕອບ:

**1** *ກ. ຄລຕ 3:10-12 ຂ. ຄລຕ 3:13-14*

**2** *ກ. ຢູ່ໃຕ້ຄວາມປ້ອຍດ່າຂອງພະບັນຍັດ*

*ຂ. ເຖິງເຮົາເຈຕະນາເຮັດດີກໍຕາມ ແຕ່ເຮົາຍັງເຮັດແຕ່ການຊົ່ວ. (ຄຳຄ້າຍຄືກັນກໍໄດ້)*

**3** *ໂດຍສະແດງວ່າຖ້າເຮົາຜິດປະການດຽວໃນພະບັນຍັດ ເທົ່າກັບວ່າຜິດໝົດ*

**4** *(ແລ້ວແຕ່ທ່ານຈະສະເໜີ)*

**5** *ເຮົາຍົກຕົວເຮົາເອງຂຶ້ນບໍ່ໄດ້ ເຊັ່ນດຽວກັນ ບໍ່ມີໃຜທີ່ຈະຖືພະບັນຍັດທຸກຂໍ້ໄດ້*

**6** *ກ. ຄວາມເຊື່ອ ຂ. ພະບັນຍັດ*

*ຄ. ເພາະບໍ່ມີໃຜທີ່ຈະປະຕິບັດຕາມພະບັນຍັດໄດ້. (ນອກຈາກພະເຢຊູ)*

**7** *ກ. ຂໍ້ 13 ຂ. ຂໍ້ 5*

**8** *(ບໍ່ມີຕອບ)*

**9** *ກ. ພະເຢຊູເສຍຄ່າໄຖ່ເຮົາຈາກໂທດບາບ ເພື່ອເຮົາມີຄວາມເສລີພາບໄດ້ແລ້ວ ຂ. ຊີວິດຂອງພະອົງເອງ ຄ. ທຸກຊາດ*

**10** *ກ. ທຸກຄົນທີ່ບໍ່ໄດ້ເຮັດຕາມຂໍ້ຄວາມທີ່ຂຽນໄວ້ໃນໜັງສືພະບັນຍັດທຸກຂໍ້. ຂ. ທຸກຄົນທີ່ຖືກແຂວນໄວ້ທີ່ຕົ້ນໄມ້*

**11** *ກ. ເບື້ອງຊ້າຍ ຂ. ຮູບເບື້ອງຂວາ*

**12** *ກ. ພະບັນຍັດ 27:26 ຂ. ພະບັນຍັດ 21:23*

**13** *ກ. ສະແດງເຖິງມະນຸດທີ່ບໍ່ສາມາດຖືຕາມພະບັນຍັດທຸກຂໍ້ ແລ້ວເພາະເຫດນັ້ນເພິ່ນຢູ່ໃນຄວາມ ມືດຄືຢູ່ໃຕ້ຄວາມປ້ອຍດ່າ. (ຄຳຄ້າຍຄືກັນກໍໄດ້)*

*ຂ. ພະເຢຊູຮັບຄວາມປ້ອຍດ່າແທນເຮົາຢູ່ໄມ້ກາງແຂນ. ມີແຕ່ພະເຊຢູຜູ້ດຽວທີ່ບໍ່ຜິດຕໍ່ພະບັນຍັດ ຈັກຂໍ້ດຽວ. ພະອົງຖືກແຂວນໄວ້ທີ່ຕົ້ນໄມ້ ເພື່ອຖືກຄວາມປ້ອຍດ່າຂອງເຮົາ. ດັ່ງນັ້ນພວກເຮົາ ທີ່ເພິ່ງຄວາມຕາຍຂອງພະເຢຊູ ເປັນຄົນເສລີພາບແລ້ວ. (ຄຳຄ້າຍຄືກັນກໍໄດ້)*

**14** *ຄາລາເຕຍ 3:10*

**15** *ແທນຄົນບາບ*

**16** *(ບໍ່ມີຕອບ)*